# ປະຫວັດມູນເຊື້ອ
# ຂອງກອງພັນຍິງປືນສາກົນ 199.

## ປະຫວັດການກຳເນີດຂອງກອງພັນຍິງປືນສາກົນ 199.

ກອງພັນຍິງປືນສາກົນໄດ້ຮັບການສ້າງຕັ້ງຂື້ນໃນວັນທີ່ 23 ພະຈິກ 2005 ຕາມຂໍ້ຕົກລົງສະບັບເລກທີ່ 2264 / ກປທ. ໂດຍພາຍໃຕ້ການຊີ້ນຳໂດຍກົງຮອບດ້ານຂອງວິທະຍາຄານນາຍທະຫານບົກ, ສ່ວນເຕັກນິກການອົບຮົມເຝິກແອບ ແມ່ນຂື້ນກັບກົມອົບຮົມກົມໃຫ່ຍເສນາທິການເປັນຜູ້ຮັບຜິດຊອບຊີ້ນຳ.

* ກອງຍິງປືນສາກົນປະກອບມີປະເພດນັກກິລາ:

- ໝວດກິລາຍິງປືນສັ້ນຊາຍ ແລະ ປືນສັ້ນຍິງ
- ໝວດກິລາຍິງປືນເຫຼັກຍາວ.

* ກອງພັນຍິງປືນສາກົນໄດ້ສົ່ງນັກກິລາຍິງປືນປະເພດຕ່າງໆເຂົ້າຮ່ວມແຂ່ງຂັນໃນຫຼາຍປະເທດເຊັ່ນ:

- ປີ 2006 ນຳນັກກິລາເຂົ້າຮ່ວມແຂ່ງຂັນຍິງປືນດ້ານຍຸດທະວິທີກອງທັບບົກອາຊຽນທີ່ປະເທດ ສສ ຫວຽດນາມເປັນເຈົ້າພາບ.
- ປີ 2007 ເຂົ້າຮ່ວມແຂ່ງຂັນຍິງປືນຄັ້ງທີ່ 17 ທີ່ປະເທດໄທເປັນເຈົ້າພາບຈັດການແຂ່ງຂັນ.
- ປີ 2008 ໄດ້ຈັດການແຂ່ງຂັນຍິງປືນຄັ້ງທີ່ 18 ທີ່ປະເທດຟີລິບປິນ ແຕ່ລາວເຮົາບໍ່ໄດ້ເຂົ້າຮ່ວມ.
- ປີ 2009 ເຂົ້າຮ່ວມແຂ່ງຂັນຄັ້ງທີ່ 19 ທີ່ປະເທດສິງກະໂປເປັນເຈົ້າພາບຈັດການແຂ່ງຂັນ.
- ປີ 2010 ເຂົ້າຮ່ວມແຂ່ງຂັນຍິງປືນຄັ້ງທີ່ 20 ທີ່ປະເທດມາເລເຊຍເປັນເຈົ້າພາບຈັດການແຂ່ງຂັນ.






ການແຂ່ງຂັນຍິງປືນຍຸດທະວິທີກອງທັບບົກອາຊຽນຄັ້ງທີ່ 20
ປະເທດມາເລເຊຍເປັນເຈົ້າພາບ ປີ 2010.

ອີງໃສ່ຈຸດພິເສດ ແລະ ເງື່ອນໄຂຕ່າງໆຂອງກົມກອງ ດັ່ງນັ້ນມາຮອດວັນທີ່ 9 ກັນຍາ 2010 ຈິ່ງໄດ້ປະກາດ ສ້າງຕັ້ງເປັນກອງພັນຍິງປືນສາກົນ 199 ໂດຍພາຍໃຕ້ການຊີ້ນຳໂດຍກົງຮອບດ້ານ ຂອງກົມໃຫຍ່ເສນາທິການ ກະຊວງປ້ອງກັນປະເທດ ຕາມຂໍ້ຕົກລົງສະບັບເລກທີ່ 1801 / ກປທ, ລົງວັນທີ່ 13 ກໍລະກົດ 2010.

*** <u>ໜ້າທີ່ ແລະ ພາລະບົດບາດຂອງກອງພັນຍິງປືນສາກົນ 199</u>.**

**ກ. <u>ໜ້າທີ່:</u>**

1. ມີໜ້າທີ່ອົບຮົມຫັດແອບຍິງປືນເພື່ອເຂົ້າຮ່ວມການແຂ່ງຂັນຍິງປືນດ້ານຍຸດທະວິທີກອງທັບບົກ ກຸ່ມປະເທດອາຊຽນເຊິ່ງຈັດຂຶ້ນເປັນປະຈຳໃນທຸກໆປີ.
2. ມີໜ້າທີ່ຫັດແອບການທະຫານ ຕາມຄຳສັ່ງອົບຮົມຫັດແອບປະຈຳປີຂອງຂັ້ນເທິງ.
3. ມີໜ້າທີ່ເພີ່ມພູນຜະລິດຕົນ, ແກ້ໄຂຊີວິດການເປັນຢູ່ຂອງກົມກອງ, ດ້ວຍນຳໃຈກຸ້ມຕົນເອງ, ເພິ່ງຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງຢ່າງມີຫົວຄິດປະດິດສ້າງ.
4. ເຄົາລົບ ແລະ ນັບຖືກົດໝາຍບ້ານເມືອງ, ປະຕິບັດທຸກຂໍ້ກຳນົດກົດລະບຽບຂອງກອງທັບ ແລະ ຮີດຄອງປະເພນີຂອງປະຊາຊົນບັນດາເຜົ່າ ແລະ ທ້ອງຖິ່ນຢ່າງເຂັ້ມງວດ.
5. ຄຸ້ມຄອງ ແລະ ປົກປັກຮັກສາສະໜາມແອບໃຫ້ຢູ່ໃນສະພາບນຳໃຊ້ປົກກະຕິ.
6. ປະຕິບັດໜ້າທີ່ອື່ນໆຕາມການມອບໝາຍຈາກກົມໃຫຍ່ເສນາທິການ.

**ຂ. <u>ບົດບາດ</u>.**

ກອງພັນຍິງປືນສາກົນ 199 ແມ່ນກົມກອງໜຶ່ງເປັນຕົວແທນໃຫ້ກອງທັບປະຊາຊົນລາວເຂົ້າຮ່ວມແຂ່ງຂັນຍິງປືນດ້ານຍຸດທະວິທີກອງທັບບົກກຸ່ມປະເທດອາຊຽນ ແລະ ເຂົ້າຮ່ວມການແຂ່ງຂັນໃນລະດັບປະເທດ ຫຼື ກິດຈະກຳອື່ນໆຕາມການຕົກລົງຂອງກະຊວງປ້ອງກັນປະເທດ.

**II. <u>ບາດກ້າວການຄັດເລືອກ ແລະ ການເຝິກແອບນັກຍິງປືນ</u>.**

**1. ຜູ້ທີ່ຈະເຂົ້າມາຝຶກແອບຍິງປືນຢູ່ໃນກອງພັນຕ້ອງມີມາດຕະຖານຄື:**

- ສຸຂະພາບສົມບູນແຂງແຮງດີ.
- ລະດັບການສຶກສາຈົບມໍປາຍ.
- ລວງສູງເພດຊາຍ 165 ຊັງຕີແມັດຂຶ້ນໄປ, ນ້ຳໜັກ 60 ກິໂລຂຶ້ນໄປ.
- ເພດຍິງ 160 ຊັງຕີແມັດຂຶ້ນໄປ ແລະ ນ້ຳໜັກ 50 ກິໂລຂຶ້ນໄປ, ອາຍຸຕ່ຳກວ່າ 23 ປີ.

**2. ບາດກ້າວ ແລະ ການຄັດເລືອກ.**

*** ບາດກ້າວທີ່ 1.**

- ອົບຮົມພາກທິດສະດີຫຼັກການຍິງປືນອາຊຽນໃຫ້ນັກຍິງໃໝ່.
- ຫັດແອບຍິງບົດອາຊຽນຂອງແຕ່ລະປະເພດປືນ.
- ກວດສອບເອົານັກຍິງປືນຜູ້ທີ່ມີສະຖິຕິດີເຂົ້າຮອບຕໍ່ໄປຕາມຄາດໝາຍທີ່ວາງໄວ້.

*** ບາດກ້າວທີ່ 2**

- ຫັດແອບທີ່ 2 ຍົກສະຖິຕິໃຫ້ດີຂຶ້ນແຕ່ລະປະເພດປືນໃຫ້ຊຳນິຊຳນານທັງດ້ານຈັງຫວະ ແລະ ກະຕິກາແຂ່ງຂັນຍິງປືນອາຊຽນ.
- ຫັດແອບຄັດເລືອກຮອບ 2 ເອົານັກຍິງທີ່ມີຄະແນນດີເຂົ້າຮອບ 3.
- ຄັດເລືອກເອົານັກຍິງຕົວຈິງ ເພື່ອເຂົ້າຮ່ວມແຂ່ງຂັນຍິງປືນຕົວຈິງ.

*** ບາດກ້າວທີ່ 3.**

- ຫັດແອບນັກຍິງທີ່ຈະໄປແຂ່ງຂັນຕົວຈິງໃຫ້ຊຳນິຊຳນານທາງດ້ານເຕັກນິກການຍິງ ແລະ ຍົກສູງສະຕິການຍິງໃຫ້ສູງຂຶ້ນ.



ນັກກິລາຍິງປືນຂອງກອງພັນຍິງປືນສາກົນ 199.



ທີມຍິງປືນສັ້ນຍິງ,ປືນສັ້ນຊາຍ ແລະ ປືນເຫຼັກຍາວຊາຍ.

3. **ຂັ້ນຕອນການເຝິກແອບຍິງປືນ.**

- ຂັ້ນຕອນທີ່1 : ກ່ອນຈະປະຕິບັດຫັດແອບຍິງລູກປືນແທ້ແມ່ນໄດ້ຫັດແອບຊ້ອມເປົ໋າ ( ເລັ່ງເປົ໋າ ) ເພື່ອເອົາພື້ນຖານດ້ານຈັງຫວະການຍິງ ແລະ ການເອົາເສັ້ນເລັ່ງພ້ອມກັບການຄິດໄລ່ໃນແຕ່ລະກ້າວຂອງບິດຍິງ.
- ຂັ້ນຕອນທີ່ 2 : ພາຍຫຼັງແອບເປົ໋າໄດ້ໄລຍະໜຶ່ງສັງເກດເຫັນວ່ານັກກິລາແຕ່ລະຄົນມີຄວາມພ້ອມແລ້ວຈິ່ງອອກສະໜາມຍິງລູກປືນແທ້, ໃນນັ້ນຊຸດທຳອິດອາດຈະແມ່ນຍິງໜ້ອຍໄປຫາຫຼາຍ ແລະ ຍິງຊ້າຫາໄວ. ຍິງທຳອິດຄົນລະ 3 ລູກໄປຫາ 10 ລູກ, ທຳອິດແມ່ນຍິງຕາມໃຈຫຼັງຈາກນັ້ນແມ່ນຍິງຈັບເວລາ ແລະ ຕາມກະຕິກາຍິງປືນຍຸດທະວິທີກອງທັບບົກອາຊຽນ.

## ບັນດາຈັງຫວະຍິງປືນຈຳນວນໜຶ່ງ
## ສຳລັບການແຂ່ງຂັນຍິງປືນດ້ານຍຸດທະວິທີກອງທັບບົກກຸ່ມປະເທດອາຊຽນ.



ຈັງຫວະຢືນຍິງປືນສັ້ນມືຂວາ



ຈັງຫວະຢືນຍິງປືນສັ້ນມືຊ້າຍ



ຈັງຫວະຢືນຍິງປືນສັ້ນສອງມື



ຈັງຫວະນັ່ງຊຸເຂົ່າຍິງປືນສັ້ນສອງມື



ຈັງຫວະນອນຍິງປືນສັ້ນສອງມື



ຈັງຫວະນັ່ງແຈບຍິງປືນສັ້ນສອງມື



ຈັງຫວະຢືນຍິງປືນເຫຼັກຍາວ



ຈັງຫວະນອນຍິງປືນເຫຼັກຍາວ



ຈັງຫວະນັງແຈບຍິງປືນເຫຼັກຍາວ



ຈັງຫວະນັງຕັ້ງເຂົ່າຍິງປືນເຫຼັກຍາວ

III. <u>ຜົນງານການເຄື່ອນໄຫວໃນປີ 2010</u>.

1. ຈຳນວນພົນເຂົ້າຮ່ວມຫັດແອບທັງໝົດມີ 30 ຄົນ, ຍິງ 10 ຄົນ.
2. ໃຊ້ເວລາການຫັດແອບ 6 ເດືອນ ສະເພາະບົດຍິງອາຊຽນ.
3. ໄດ້ເຄື່ອນໄຫວແຂ່ງຂັນຢູ່ຕ່າງປະເທດ 1 ຄັ້ງ ແລະ ຢູ່ພາຍໃນ 1 ຄັ້ງຜົນໄດ້ຮັບຄື:

ກ. <u>ແຂ່ງຂັນຢູ່ຕ່າງປະເທດ( ປະເທດມາເລເຊຍ )</u>.

- ຜົນໄດ້ຮັບໃນການແຂ່ງຂັນແມ່ນບໍ່ທັນໂດດເດັ່ນແຕ່ກໍ່ເປັນທີ່ເພິ່ງພໍໃຈເພາະພວກເຮົາແມ່ນໄດ້ເກັບກ່ຽວເອົາປະສົບການ, ເອົາບົດຮຽນອັນໃໝ່ ເພື່ອມາພັດທະນາກົມກອງ, ມາພັດທະນາກອງທັບ, ອີກດ້ານໜຶ່ງໄດ້ນຳເອົາຮີດຄອງປະເພນີ-ວັດທະນາທຳອັນດີງາມຂອງຊາດລາວໄປເຜີຍແຜ່ຕໍ່ສາກົນອີກດ້ວຍ.



ການແຂ່ງຂັນຍິງປືນຍຸດທະວິທີທະຫານບົກ ຄັ້ງທີ່ 10 ປະເທດ ມາເລເຊຍ.




ບັນດາຜົນສຳເລັດ ແລະ ລາງວັນທີ່ໄດ້ຮັບ ຈາກການແຂ່ງຂັນ.

ຂ. <u>ແຂ່ງຂັນຢູ່ພາຍໃນປະເທດ</u>.

- ໃນປີ 2010 ກອງພັນຍິງປືນສາກົນໄດ້ສົ່ງນັກກິລາທັງໝົດ 19 ຄົນ, ຍິງ 11 ຄົນເຂົ້າຮ່ວມແຂ່ງຂັນຍິງປືນທົ່ວປະເທດຄັ້ງທີ່ 1 ທີ່ສະຫະພັນຍິງປືນແຫ່ງຊາດຈັດຂຶ້ນໃນລະຫວ່າງວັນທີ່ 24-26 ພະຈິກ 2011 ທີ່ສະໜາມຍິງປືນແຫ່ງຊາດຫຼັກ 16 ຜົນໄດ້ຮັບໃນການແຂ່ງຂັນມີດັ່ງນີ້: ປະເພດບຸກຄົນຍາດໄດ້ 2 ຫຼຽນຄຳ ແລະ 1 ຫຼຽນເງິນ, ປະເພດທີມຍາດໄດ້ 10 ຫຼຽນຄຳ, 4 ຫຼຽນເງິນ ແລະ 5 ຫຼຽນທອງແດງ.

IV. ແຜນການເຄື່ອນໄຫວໃນປີ 2011.

1. ຄັດເລືອກເອົານັກກິລາ ( ນັກຍິງໃໝ່ ) ທີ່ມີຈິດໃຈສະມັກຫັດແອບຍິງປືນຢູ່ບັນດາກົມກອງ ເພື່ອເປັນນັກຍິງສືບທອດ ແລະ ປ່ຽນແທນນັກຍິງເກົ່າທີ່ບໍ່ສາມາດຍິງໄດ້ຕໍ່ໄປ.
2. ມີແຜນການຫັດແອບຍິງປືນອາຊຽນ ເພື່ອກຽມເຂົ້າຮ່ວມງານແຂ່ງຂັນຍິງປືນດ້ານຍຸດທະວິທີກອງທັບບົກກຸ່ມປະເທດອາຊຽນຄັ້ງທີ່ 21 ທີ່ປະເທດອິນໂດເນເຊຍເປັນເຈົ້າພາບໃນປີ 2011.

- ສົ່ງນັກກິລາຍິງປືນເພດຍິງຈຳນວນ 2 ຄົນໃຫ້ສະຫະພັນຍິງປືນແຫ່ງຊາດເພື່ອເຂົ້າຮ່ວມເຝິກຊ້ອມນຳສະຫະພັນຍິງປືນແຫ່ງຊາດລາວຢູ່ສະໜາມຫຼັກ 16 ເພື່ອກຽມເຂົ້າຮ່ວມແຂ່ງຂັນກິລາຊີເກມຢູ່ປະເທດອິນໂດເນເຊຍ ນອກຈາກນີ້ແລ້ວແມ່ນກຽມນັກກິລາຈຳນວນໜຶ່ງ ເພື່ອເປັນຕົວແທນໃຫ້ແກ່ກົມໃຫຍ່ເສນາທິການເຂົ້າ ຮ່ວມແຂ່ງຂັນມະຫາກຳກິລາແຫ່ງຊາດ ທີ່ແຂວງຫຼວງພະບາງເປັນເຈົ້າພາບໃນທ້າຍປີ 2011.